ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 37 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 23 ກັນຍາ 2015

ສຳນັກງານ ຄຄຊ
ເລກທີ 992/ສຄຊ
ວັນທີ 23.9.15
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 07/09/2015 ຫາ 11/09/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນນັກລົງທຶນບໍ່ໝັ້ນໃຈຕໍ່ທິດທາງການຟື້ນຕົວທາງດ້ານເສດຖະກິດໃນຂົງເຂດເອີຣົບ ພາຍຫຼັງຕົວເລກດຸນການຄ້າຂອງເຢຍລະມັນເກີນດຸນຕໍ່າກວ່າລະດັບທີ່ຄາດຄະເນໃນເບື້ອງຕົ້ນຈາກ 24,1 ຕື້ເອີໂຣ ເປັນ 22,8 ຕື້ເອີໂຣໃນເດືອນ 7/2015. ສ່ວນເງິນຢວນ ແລະ ເງິນເຢນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກດຸນການຄ້າຂອງ ສປ.ຈີນ ເກີນດຸນສູງກວ່າລະດັບທີ່ຄາດຄະເນໃນເບື້ອງຕົ້ນຈາກ 43,03 ຕື້ໂດລາເປັນ 60,24 ຕື້ໂດລາໃນເດືອນ 8/2015.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 01/09/2015 | ອາທິດນີ້ 08/09/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1271 | 1,1175 | 0,86% |
| ໂດລາ/ເຢນ | 120,41 | 119,66 | 0,63% |
| ໂດລາ/ບາດ | 35,72 | 36,17 | -1,23% |
| ໂດລາ/ເປໂຊ | 46,68 | 46,95 | -0,57% |
| ໂດລາ/ຣູເປັຍ | 14.078,11 | 14.276,78 | -1,39% |
| ໂດລາ/ໂດລາສິງກະໂປ | 1,4086 | 1,4254 | -1,18% |
| ໂດລາ/ຢວນ | 6,3681 | 6,3654 | 0,04% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 6,15% ຈາກ 48,24 ໂດລາ/ບາເຣວ ມາເປັນ 45,28 ໂດລາ/ບາເຣວ ຍ້ອນການຄາດຄະເນປະລິມານການຜະລິດນ້ຳມັນດິບຂອງຊີງເຂດທະເລເໜືອວ່າຈະເພີ່ມຂຶ້ນ 0,06 ລ້ານບາເຣວ/ວັນ ເປັນ 2,07 ລ້ານບາເຣວ/ວັນ ຊຶ່ງເປັນລະດັບທີ່ສູງທີ່ສຸດໃນຮອບ 2 ປີ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,79% ຈາກ 1.141,23 ໂດລາ/ອອນ ມາເປັນ 1.120,79 ໂດລາ/ອອນ ຍ້ອນການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,07% ສຳລັບອັດຕາ ທຫກ ແຕ່ອ່ອນຄ່າລົງ 0,01% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,94% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,54% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 1,02% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,77% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 7,20% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 8,15% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 01/09/2015 | | | ອາທິດນີ້ 08/09/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.157,33 | 8.185,70 | 8.167,54 | 8.152,08 | 8.180,00 | 8.161,62 | 0,064% | 0,07% | 0,07% |
| ບາດ | 232,29 | 233,42 | 233,30 | 230,13 | 231,28 | 231,12 | 0,94% | 0,92% | 0,94% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.225,00 | 8.287,00 | 8.256,00 | 8.223,60 | 8.290,53 | 8.257,07 | 0,02% | -0,04% | -0,01% |
| ບາດ | 233,05 | 234,77 | 233,91 | 232,15 | 233,13 | 232,64 | 0,39% | 0,70% | 0,54% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,83% | 1,24% | 1,08% | 0,88% | 1,35% | 1,17% | | | |
| ບາດ | 0,33% | 0,58% | 0,26% | 0,88% | 0,80% | 0,66% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 4,36% ທຽບໃສ່ວັນທີ 04/09/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 50,73%;
- ປະລິມານເງິນ M2 ຫຼຸດລົງ 0,37% ເມື່ອທຽບໃສ່ວັນທີ 28/08/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,88%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 07/09/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 51,12 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 105,04 ລ້ານໂດລາ ແລະ ຂາຍໂດລາໄດ້ 53,92 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 2.931,26 ລ້ານບາດ (ໃນນີ້ ຊື້ບາດໄດ້ 547,48 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 3.478,74 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 12,93% ແລະ ຫຼຸດລົງ 11,37% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,53 ລ້ານໂດລາ ແລະ ເງິນບາດມີຈໍານວນ 82,94 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 37,62 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 25,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 111,56 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 4.300,79 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 01/09/2015 | | ອາທິດທີ 07/09/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 27,39 | 378,79 | 21,97 | 280,05 | -19,79% | -26,07% |
| - ທ/ຄທຸລະກິດອື່ນໆ | 107,90 | 394,52 | 83,07 | 267,44 | -23,01% | -32,21% |
| ລວມຊື້: | **135,28** | **773,30** | **105,04** | **547,48** | **-22,36%** | **-29,20%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 24,16 | 199,85 | 29,22 | 305,86 | 20,93% | 53,05% |
| - ທ/ຄທຸລະກິດອື່ນໆ | 23,11 | 3.569,66 | 24,70 | 3.172,88 | 6,87% | -11,12% |
| ລວມຂາຍ: | **47,27** | **3.769,51** | **53,92** | **3.478,74** | **14,06%** | **-7,71%** |
| ຊື້-ຂາຍສຸດທິ ທທກ | **88,01** | **-2.996,20** | **51,12** | **-2.931,26** | **-41,91%** | **-2,17%** |
| ຜິດດ່ຽງ ຊື້-ຂາຍ | 65,06 | -387,45 | 48,67 | -535,41 | -163,72% | -147,06% |
| ມູນຄ່າການຊື້-ຂາຍ | **182,56** | **4.542,81** | **158,96** | **4.026,23** | **-12,93%** | **-11,37%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 314,50 | 0,00 | 165,00 | | |
| - ທຫລ ຂາຍໃຫ້ ທທກ | 33,00 | 0,00 | 37,62 | 140,00 | | |
| ຊື້-ຂາຍສຸດທິ ທຫລ | **-33,00** | **314,50** | **-37,62** | **25,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **8,92** | **231,53** | **1,53** | **82,94** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,06 | 2.563,08 | 0,13 | 4.300,79 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 71,36 | 0,00 | 111,69 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-71,30** | **2.563,08** | **-111,56** | **4.300,79** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 09/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,31% ເພີ່ມຂຶ້ນ 0,02% ຈາກ 1,29% ໃນເດືອນ 08/2015 ຍ້ອນລາຄາອາຫານຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເວົ້າສະເພາະແມ່ນລາຄາເຂົ້າສານ ແລະ ປະເພດ

ຜົກລິດ ບວກກັບເປັນໄລຍະທີ່ເລີ່ມເປີດສົກຮຽນໃໝ່ຈະມີການໃຊ້ຈ່າຍຄ່າຮຽນ ແລະ ອຸປະກອນການຮຽນສິ່ງພິມໃຫ້ໝວດການສຶກສາ ແລະ ໝວດເຄື່ອງນຸ່ງຫົ່ມຄາດວ່າຈະເພີ່ມຂຶ້ນ.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 163,1 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 7,6% ທຽບໃສ່ອາທິດຜ່ານມາ.

## 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 704 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 15,48% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 538,28 ຕື້ກີບ ເພີ່ມຂຶ້ນ 11,45% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (04-10/09/2015) ມີຈຳນວນ 1.601 ຄັ້ງ ໂດຍມີມູນຄ່າ 842,32 ຕື້ກີບ ເພີ່ມຂຶ້ນ 173,76% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 406 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.259,33 ຈຸດ ເພີ່ມຂຶ້ນ 1,84% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 572.886 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,49 ຕື້ກີບ ເພີ່ມຂຶ້ນ 133,18% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 51,94% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.537 ກີບ/ຮຸ້ນ ເພີ່ມຂຶ້ນ 45 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 26.137 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 144,71 ລ້ານກີບ ເພີ່ມຂຶ້ນ 37,19% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 19,02% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,80%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.233 ກີບ/ຮຸ້ນ ຫຼຸດລົງ 61 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 529.705 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,30 ຕື້ກີບ ເພີ່ມຂຶ້ນ 143,53% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 57,55% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.000 ກີບ/ຮຸ້ນ ເພີ່ມຂຶ້ນ 133 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 800.000 ກີບ ຫຼຸດລົງ 96,61% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.828 ກີບ/ຮຸ້ນ ຫຼຸດລົງ 38 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 47,91 ລ້ານກີບ ເພີ່ມຂຶ້ນ 240,85%. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 26,55% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມຝຶກອົບຮົມ: ❶ຝຶກອົບຮົມ ໃນຫົວຂໍ້: "External Sector Issuses" ຢູ່ ສສ ຫວຽດນາມ ແລະ ❷ຝຶກອົບຮົມ "Financial Consumer Protection" ຢູ່ ສສ ຫວຽດນາມ;
- ສຳເລັດການຈັດກອງປະຊຸມ ແລະ ສຳມະນາ: ❶ກອງປະຊຸມຄົ້ນຄວ້າຮ່າງຄຳສັ່ງ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍ *ການຍຶດ, ອາຍັດທຶນທີ່ພົວພັນກັບກໍ່ການຮ້າຍ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບກົມນິຕິກຳ ກະຊວງຍຸດຕິທຳ* ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ທີ່ ທຫລ, ❷ກອງປະຊຸມເຜີຍແຜ່ກົດໝາຍໃຫ້ກັບບັນດາກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ໃນຂອບເຂດນະຄອນຫຼວງວຽງຈັນ ທີ່ ສທຄ, ❸ສຳມະນາ ໃນຫົວຂໍ້: "ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຕາມລະບຽບອາກອນຂອງບັນຊີຢູ່ຕ່າງປະເທດ (FATCA ) ທີ່ ທຫລ;
- ສຳເລັດການຕ້ອນຮັບຄະນະຊ່ຽວຊານຈາກ ທະນາຄານແຫ່ງລັດຫວຽດນາມ ທີ່ເດີນທາງມາຈັດສຳມະນາ ໃນຫົວຂໍ້: "ການຊື້-ຂາຍ ນຳເຂົ້າ-ສົ່ງອອກວັດຖຸມີຄ່າທີ່ໃຊ້ຊຳລະສາກົນ" ທີ່ ສປປ ລາວ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ປັບປຸງຮ່າງດຳລັດວ່າດ້ວຍລະບົບຊຳລະແຫ່ງຊາດຮ່ວມກັບຄະນະຮັບຮອງຮ່າງດຳລັດຂອງ ທຫລ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກຳລັງ ທີ່ສະຖາບັນການທະນາຄານ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ